# ຄຳຖາມເຈາະຈີ້ມຕໍ່ກອງປະຊຸມທາບທາມ
# ຄຳເຫັນຕໍ່ການປັບປຸງຮ່າງລັດຖະທຳມະນູນ ສະບັບປີ 2015

**ຮຽນ: ຄະນະປະທານກອງປະຊຸມ ທີ່ເຄົາລົບ ແລະ ນັບຖືຢ່າງສູງ**

- **ບັນດາທ່ານຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ສະບັບປີ 2015 ທີ່ນັບຖື ແລະ ຮັກແພງ**
- **ບັນດາທ່ານສະມາຊິກສະພາແຫ່ງຊາດ, ທ່ານຍິງ-ທ່ານຊາຍ ທີ່ນັບຖື ແລະ ຮັກແພງ**

ຜ່ານການຮັບຟັງການອະທິບາຍເນື້ອໃນ ຂອງຜູ້ຕາງໜ້າຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ສະບັບປີ 2015 ກ່ຽວກັບ ເຫດຜົນ ແລະ ຄວາມຈາເປັນ, ຂັ້ນຕອນ ແລະ ຂອບການປັບປຸງລັດຖະທາມະນູນ, ໂຄງປະກອບ ແລະ ທິດທາງແຜນການໃນຕໍ່ໜ້າ ຂອງການປັບປຸງລັດຖະທຳມະນູນ. ສະນັ້ນ ເພື່ອເປັນບ່ອນອີງໃຫ້ແກ່ບັນດາທ່ານໄດ້ ຄົ້ນຄວ້າ ແລະ ປະກອບຄຳເຫັນ ຢ່າງມີຈຸດສຸມ ຂ້າພະເຈົ້າຂໍມີບາງຄຳເຫັນເຈາະຈີ້ມ ດັ່ງນີ້:

**1. ຄຳນຳ:**

- ວັກທີ 1 ໄດ້ປັບປຸງເນື້ອໃນຄືໃໝ່ ໂດຍເອົາເນື້ອໃນວັກທີ 1 ຂອງລັດຖະທຳມະນູນ ສະບັບປີ 1991 ມາກຳນົດໃສ່ ຄື: ນັບເປັນເວລາຫຼາຍພັນປີມາແລ້ວ ທີ່ປະຊາຊົນລາວບັນດາເຜົ່າ ໄດ້ດຳລົງຄົງຕົວ ແລະ ຂະຫຍາຍຕົວຢູ່ບົນດິນແດນອັນແສນຮັກແຫ່ງນີ້. ເລີ່ມແຕ່ກາງສະຕະວັດທີສິບສີ່ເປັນຕົ້ນມາ, ບັນພະບູລຸດຂອງພວກເຮົາ ໂດຍສະເພາະເຈົ້າຟ້າງຸ່ມໄດ້ນຳພາປະຊາຊົນເຮົາ ກໍ່ຕັ້ງ ແລະ ສ້າງປະເທດລ້ານຊ້າງ ໃຫ້ເປັນເອກະພາບ ແລະ ຈະເລີນຮຸ່ງເຮືອງ. ຕໍ່ການປັບປຸງວິທີຂຽນຄືນໃໝ່ຄືແນວນັ້ນ ບັນດາທ່ານເຫັນວ່າມີຄວາມສອດຄ່ອງ ແລະ ເໝາະແລ້ວບໍ່ ?

- ວັກທີ 5 ໄດ້ປັບປຸງໂດຍເພີ່ມບາງເນື້ອໃນເຂົ້າຕື່ມ ຄື ລັດຖະທຳມະນູນ ສະບັບປັບປຸງປີ 2025 ແນໃສ່ສືບຕໍ່ສ້າງການຫັນປ່ຽນ ຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນລະບົບອຳນາດແຫ່ງລັດ ແລະ ຍູ້ແຮງການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ. ຕໍ່ການກຳນົດຄືແນວນັ້ນ ບັນດາທ່ານເຫັນວ່າສອດຄ່ອງແລ້ວ ບໍ່ ? ຫຼື ຈະຄວນກຳນົດຄືແນວໃດ ເພື່ອໃຫ້ແທດເໝາະ ແລະ ສອດຄ່ອງກັບຕົວຈິງ ?;

**2. ມາດຕາ 7** ໄດ້ປັບປຸງວິທີຂຽນຄືນໃໝ່ໂດຍເພີ່ມຄຳວ່າ ໂດຍຜ່ານຄຳສະເໜີຂອງປະຊາຊົນ ຫຼື ທາງສຽງສັງຄົມ ໃສ່ທ້າຍປະໂຫຍກນັ້ນ ບັນດາທ່ານເຫັນວ່າມີຄວາມສອດຄ່ອງ ແລະ ເໝາະສົມແລ້ວບໍ່ ຫຼື ຈະກຳນົດຄືແນວໃດ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໄດ້;

**3. ມາດຕາ 11** ເປັນມາດຕາທີ່ໄດ້ກຳນົດເຂົ້າໃໝ່ ຊຶ່ງເນື້ອໃນທີ່ກຳນົດເຂົ້າໃໝ່ນັ້ນ ບັນດາທ່ານເຫັນວ່າມີຄວາມຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງແລ້ວບໍ່ ?

**4. ມາດຕາ 13** ໄດ້ປັບເນື້ອໃນຄືນໃໝ່ຄື: ແມ່ນເສດຖະກິດເອກະລາດເປັນເຈົ້າຕົນເອງ ບົນພື້ນຖານການສົ່ງເສີມເສດຖະກິດພູມປັນຍາ ທີ່ມີເອກະລັກສະເພາະ ຊຶ່ງການກຳນົດຄືແນວນັ້ນ ບັນດາທ່ານເຫັນວ່າມີຄວາມ

ສອດຄ່ອງ ແລະ ຮັດກຸມແລ້ວບໍ່ ຫຼື ຈະຄວນກຳນົດຄືແນວໃດ ເພື່ອໃຫ້ມີຄວາມລະອຽດ ແລະ ສະດວກໃນການຈັດຕັ້ງປະຕິບັດ ?;

**5. ມາດຕາ 47** ໄດ້ເພີ່ມເນື້ອໃນເປັນວັກທີສອງ ແລະ ວັກທີສາມ ເຂົ້າຕື່ມ, ຕໍ່ກັບເນື້ອໃນດັ່ງກ່າວ ບັນດາທ່ານເຫັນວ່າ ຮັດກຸມ, ແທດເໝາະ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການໃນໄລຍະໃໝ່ແລ້ວ ຫຼື ບໍ່?. ສຳລັບຄຳວ່າ <u>ສ້າງສາ</u> ແລະ ຄຳວ່າ <u>ພັດທະນາ</u> ນັ້ນ ໄດ້ມີການສົນທະນາກັນຫຼາຍ ວ່າຄວນຈະນຳໃຊ້ຄຳໃດ ຈຶ່ງເໝາະສົມ ສະເໜີໃຫ້ບັນດາທ່ານ ຄົ້ນຄວ້າ, ປະກອບຄຳເຫັນຕື່ມ ?;

**6. ມາດຕາ 54** ກ່ຽວກັບການກຳນົດ:

- ຂໍ້ 4 ຄາວ່າ: ຍົກເວັ້ນ ອັດຕາ ພາສີ ແລະ ອາກອນ ບັນດາທ່ານ ເຫັນວ່າຄວນຈະການົດຄາວ່າ <u>ຍົກເວັ້ນ</u> ໄວ້ ຫຼື ຄວນຈະຕັດອອກ ເພື່ອໃຫ້ສອດຄ່ອງກັບມະຕິ ສະບັບເລກທີ 04 ຂອງພັກ;

- ຂໍ້ 9 ທີ່ການົດວ່າ: <u>ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ຕາມການສະເໜີຂອງປະທານປະເທດ</u>. ບັນດາທ່ານເຫັນວ່າ ຖືກຕ້ອງ, ເໝາະສົມແລ້ວ ຫຼື ບໍ່ ເນື່ອງຈາກວ່າ ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ແມ່ນຜູ້ດຽວກັນ ແຕ່ປະຕິບັດສອງໜ້າທີ່ ?;

- ຂໍ້ 21 ທີ່ກຳນົດວ່າ: <u>ມອບສິດໃຫ້ຄະນະປະຈຳສະພາແຫ່ງຊາດ ຕົກລົງວຽກງານທີ່ຈຳເປັນ ແລະ ຮີບດ່ວນ ແລ້ວລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ</u> ຊຶ່ງການກຳນົດຄືແນວນັ້ນ ບັນດາທ່ານເຫັນວ່າ ມີຄວາມເໝາະສົມແລ້ວບໍ່ ຫຼື ຄວນຈະຕັດອອກ ເນື່ອງຈາກວ່າມາດຕາ 56 ວັກທີໜຶ່ງ ກໍໄດ້ກຳນົດວ່າ: <u>ຄະນະປະຈຳສະພາແຫ່ງຊາດ ແມ່ນອົງການປະຈຳການຂອງສະພາແຫ່ງຊາດ, ປະຕິບັດໜ້າທີ່ແທນສະພາແຫ່ງຊາດ ໃນເວລາສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ</u>.

**7. ມາດຕາ 78** ຂໍ້ 12 ທີ່ການົດວ່າ: <u>ມອບສິດໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງຕົກລົງວຽກງານທີ່ຈຳເປັນ ແລະ ຮີບດ່ວນ ແລ້ວລາຍງານຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ</u> ຊຶ່ງການກຳນົດຄືແນວນັ້ນ ບັນດາທ່ານເຫັນວ່າ ມີຄວາມເໝາະສົມແລ້ວບໍ່ ຫຼື ຄວນຈະຕັດອອກ ເນື່ອງຈາກວ່າມາດຕາ 79 ວັກທີໜຶ່ງ ກໍໄດ້ການົດວ່າ: <u>ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແມ່ນ ອົງການປະຈຳການຂອງສະພາປະຊາຊົນຂັ້ນແຂວງ, ປະຕິບັດໜ້າທີ່ແທນສະພາປະຊາຊົນຂັ້ນແຂວງ ໃນເວລາບໍ່ໄດ້ເປີດກອງປະຊຸມ</u>;

**8. ມາດຕາ 86** ເນື້ອໃນວັກທີສາມ ທີ່ການົດວ່າ: <u>ໃນກໍລະນີຈຳເປັນ ອາດຈະສ້າງເຂດພິເສດຂຶ້ນ ຕາມການຕົກລົງຂອງສະພາແຫ່ງຊາດ</u> ນັ້ນ ບັນດາທ່ານເຫັນວ່າ ຄວນຮັກສາໄວ້ ຫຼື ຄວນຈະຕັດອອກ ເນື່ອງຈາກວ່າປັດຈຸບັນບໍ່ໄດ້ສ້າງເປັນເຂດພິເສດແລ້ວ ?;

**9. ມາດຕາ 87** ວັກທີສາມ ກ່ຽວກັບການກາໍນົດທີ່ວ່າ ປະທານ ຫຼື ຄະນະກຳມະການປົກຄອງເທດສະບານນັ້ນ ບັນດາທ່ານເຫັນວ່າມີຄວາມຖືກຕ້ອງ, ສອດຄ່ອງກັບສະພາບການຈັດຕັ້ງປະຕິບັດຕົວຈິງແລ້ວ ຫຼື ບໍ່ ? ຫຼື ຈະຄວນຮັກສາໄວ້ຄືເກົ່າວ່າ "ຫົວໜ້າເທດສະບານ"?;

**10. ມາດຕາ 88** ໄດ້ກຳນົດ ສິດ ແລະ ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນ, ການກຳນົດຄືດັ່ງກ່າວບັນດາທ່ານ ເຫັນວ່າຄົບຖ້ວນ, ຖືກຕ້ອງ, ສອດຄ່ອງ ແລະ ແທດເໝາະກັບສະພາບການຈັດຕັ້ງປະຕິ ບັດຕົວຈິງແລ້ວບໍ່ ? ຫຼື ຈະຄວນກຳນົດຄືແນວໃດຕື່ມ?;

**11. ມາດຕາ 98 ໄດ້ປັບປຸງເນື້ອໃນຄືນໃໝ່ ຄື** ອົງການໄອຍະການປະຊາຊົນ ແມ່ນ ອົງການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີ ຊຶ່ງການປັບປຸງເນື້ອໃນຄືນໃໝ່ນີ້ ກໍເພື່ອເປັນການເຈາະຈົງ ໃຫ້ເຫັນພາລະບົດບາດ ແລະ ໜ້າທີ່ຕົ້ນຕໍ່ຂອງອົງການໄອຍະການປະຊາຊົນ ຄືການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຕໍ່ການປັບປຸງເນື້ອໃນດັ່ງກ່າວ ບັນດາທ່ານເຫັນວ່າມີຄວາມເໝາະສົມແລ້ວບໍ່;

**12. ໝວດທີ 11 ອົງການກວດສອບແຫ່ງລັດ ແລະ ການກວດກາລັດ** ໂດຍສະເພາະແມ່ນມາດຕາກຳນົດເຂົ້າໃໝ່ (ມາດຕາ 103 ຫາ ມາດຕາ 110) ນັ້ນ ບັນດາທ່ານເຫັນວ່າການກຳນົດຄືດັ່ງກ່າວ ມີຄວາມສອດຄ່ອງ ແລະ ຮັດກຸມແລ້ວບໍ່ ຫຼື ຈະຄວນກຳນົດຄືແນວໃດ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໄດ້.

**(ຂໍຮຽນເຊີນ)**